ວາລະສານການສຶກສາຄູລາວແບບຍືນຍົງ ວິທະຍາໄລຄູສາລະວັນ ປີທີ 1 ສະບັບທີ 2 (ເດືອນ ທັນວາ 2025)
ໜ້າ 62 – 70
Lao Journal of Sustainable Teacher Education SALAVAN Teacher Training College,
Volume 1 No 2 (December, 2025) Page 62 – 70

ບົດຄວາມວິໄຈ
(Research Article)

ວາລະສານການສຶກສາຄູລາວແບບຍືນຍົງ
ວິທະຍາໄລຄູສາລະວັນ
https://www.sttcjournal.edu.la
ດຳເນີນການວາລະສານໂດຍ ວິທະຍາໄລຄູສາລະວັນ

# ການປົກປັກຮັກສາ ແລະ ສົ່ງເສີມວັດທະນະທຳສິລະປະການສະແດງທີ່ເປັນເອກະລັກຂອງເມືອງມໍລະດົກໂລກ ແຂວງຫຼວງພະບາງ ຕາມແຜນພັດທະນາວັດທະນະທຳ-ສັງຄົມແຫ່ງຊາດລາວ.

# The Preservation and Promotion of Unique Performing Arts in Luang Prabang World Heritage City, in Accordance with the Lao National Socio-Cultural Development Plan.

ສົມເໝາະ ປັນຍາວົງ[1], ພອນ ເພັງປັນຍາ[2], ເຄືອວັນ ສິມມາລາວົງ[3], ຈິນດາ ສີພາລາ[4], ແລະ ລຳພົງ ວໍລະດີ[5]
Sommor PANYAVONG, Phone PHENGPHANYA, Kheuavan SIMMALAVONG, Chinda SEEPHALAR & Lamphong VOLADY

## ບົດຄັດຫຍໍ້

ການຄົ້ນຄວ້າແບບຄຸນນະພາບນີ້ ມີຈຸດປະສົງເພື່ອຄົ້ນຫາປະຫວັດຄວາມເປັນມາ, ອະທິບາຍຂະບວນການປ່ຽນແປງ, ແລະ ສະເໜີແນວທາງການປົກປັກຮັກສາ ແລະ ສົ່ງເສີມສິລະປະການສະແດງພື້ນເມືອງທີ່ເປັນເອກະລັກຂອງແຂວງຫຼວງພະບາງ. ການເກັບກຳຂໍ້ມູນແມ່ນໃຊ້ການສຳພາດແບບເຈາະເລິກບັນຫາ

**ຜົນການສຶກສາພົບວ່າ:**

ສິລະປະການສະແດງພື້ນເມືອງມີ 3 ປະເພດຄື: ການຂັບ (ມີ 9 ປະເພດຍ່ອຍ ເຊັ່ນ: ຂັບທຸ້ມ, ຂັບງ້ອມ, ຂັບເສືອເຂົ້າເລົ່າ), ການຟ້ອນ (ຟ້ອນນາງແກ້ວ, ຟ້ອນພະລັກພະລາມ), ແລະ ລະຄອນ (ລະຄອນອີ່ປ໋ອກ). ດ້ານການປ່ຽນແປງ: ການຂັບໄດ້ປ່ຽນຈາກການໃຊ້ສັບສຳນວນວົງແຄບມາເປັນການພັນລະນາແບບປະສົມປະສານ (ເກົ່າ-ໃໝ່)

---

[1] ສົມເໝາະ ປັນຍາວົງ ພະແນກຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ ຄະນະອັກສອນສາດ ມຊ/ສປປ ລາວ.

[2] ພອນ ເພັງປັນຍາ ຄະນະພາສາສາດ ມະຫາວິທະຍາໄລສຸພານຸວົງ/ ສປປ ລາວ.

[3] ເຄືອວັນ ສິມມາລາວົງ ພະແນກຄຸ້ມຄອງປະເພນີ, ພິທີກຳ ແລະ ການນຸ່ງຖື ກົມສິລະປະ-ວັດທະນະທຳກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ/ ສປປ ລາວ.

[4] ຈິນດາ ສີພາລາ ພາກວິຊາພາສາ-ວັດທະນະທຳລາວ ຄະນະອັກສອນສາດ ມຊ/ ສປປ ລາວ.

[5] ລຳພົງ ວໍລະດີ  ກຳມາທິການການຕ່າງປະເທດ ສະພາແຫ່ງຊາດ/ ສປປ ລາວ.

Corresponding Author: Sommor PANYAVONG; Email: more_ries85@yahoo.com;  Tel: 020 5912 5301

ລວມທັງການຈັດຕັ້ງກຸ່ມຂັບເພື່ອຮັບໃຊ້ງານບຸນທາງນອກ. ການຟ້ອນນາງແກ້ວ ແລະ ຟ້ອນພະລັກພະລາມມີການຕັດທ່າຟ້ອນລົງ (ນາງແກ້ວຈາກ 17 ທ່າ ເຫຼືອ 8 ທ່າ; ພະລັກພະລາມຈາກ 10 ໄມ້ ເຫຼືອ 3 ໄມ້). ລະຄອນອີ່ປ໋ອກໄດ້ປ່ຽນເນື້ອໃນມາໂຄສະນາກ່ຽວກັບສຸຂະສຶກສາ ແລະ ສິດທິເດັກຕາມຄວາມຮຽກຮ້ອງຕ້ອງການຂອງສັງຄົມ. ສະນັ້ນ, ຜົນການຄົ້ນຄວ້າສະແດງໃຫ້ເຫັນເຖິງເຫດຜົນຫຼາກຫຼາຍໃນການປົກປັກຮັກສາ. ຂໍ້ສະເໜີແນະຫຼັກຄື: ຄວນມີການກຳນົດນະໂຍບາຍ ແລະ ວາງລະບຽບຫຼັກການທີ່ເໝາະສົມ ເພື່ອຊຸກຍູ້ສົ່ງເສີມສິລະປະການສະແດງໃນທົ່ວປະເທດ.

**ຄຳສັບສຳຄັນ:** ປະຫວັດຄວາມເປັນມາ, ການປ່ຽນແປງ, ການປົກປັກຮັກສາ, ການສົ່ງເສີມສິລະປະການສະແດງ.

## Abstract

This qualitative research aimed to explore the history, explain the evolution, and propose guidelines for the preservation and promotion of the unique traditional performing arts of Luang Prabang Province. Data were collected through in-depth interviews.

**The study found that**:

The traditional performing arts consist of 3 types : Driving/Chanting (including 9 sub-types such as *Khap Thum*, *Khap Ngom*, and *Khap Suea Khao Lao* ), Dancing (*Nang Kaeo* Dance, *Phralak Phralam* Dance ), and Drama (*Ipok* drama ). Regarding Evolution (Changes):

- Driving/Chanting (Khap): The chanting style changed from using narrow, confined expressions to a mixed descriptive style (old and new) , including the organization of chanting groups hired to perform at outside festivals.
- Dancing: The *Nang Kaeo* Dance and the *Phralak Phralam* Dance had their routines significantly shortened due to time constraints for audiences. The *Nang Kaeo* Dance was cut from 17 original moves to only 8 moves , and the *Phralak Phralam* Dance was cut from 10 moves to 3 moves.
- Drama: The *Ipok* drama changed its content to advocate for health education and children's rights, following the needs of society.

Consequently, the research results clearly show various reasons for preservation. The main recommendation is that policies and regulations should be appropriately set to promote performing arts nationwide.

**key words:** history, evolution, preservation, promotion of the performing arts.

## ບົດນຳ

ວັດທະນະທຳລາວເປັນເອກະລັກທີ່ສະທ້ອນເຖິງຮາກຖານຄວາມສາມັກຄີ ແລະ ຄວາມໝັ້ນຄົງຂອງຊາດ. ອີງຕາມລັດຖະທຳມະນູນ ແຫ່ງ ສປປ ລາວ ມາດຕາ 23 (ສະພາແຫ່ງຊາດ, 2025) ແລະ ມະຕິສູນກາງພັກຄັ້ງທີ 9 ໄດ້ກຳນົດໃຫ້ລັດສົ່ງເສີມການອະນຸລັກວັດທະນະທຳທີ່ເປັນມູນເຊື້ອອັນດີງາມ. ຢ່າງໃດກໍຕາມ, ໃນທ່າມກາງການປ່ຽນແປງຂອງຍຸກສະໄໝ, ການຮັກສາສິລະປະການສະແດງໃຫ້ຄົງຢູ່ຢ່າງມີຄຸນຄ່າ ແລະ ຖືກຕ້ອງຕາມແບບແຜນເດີມຍັງເປັນສິ່ງທ້າທາຍທີ່ຕ້ອງການການສຶກສາ ແລະ ປົກປັກຮັກສາຢ່າງເປັນລະບົບ.

ລັດຖະບານໄດ້ກຳນົດຫຼັກການເພື່ອໃຫ້ທຸກພາກສ່ວນຮ່ວມກັນອະນຸລັກ ແລະ ພັດທະນາວັດທະນະທຳລາວໃຫ້ມີລັກສະນະຊາດ, ປະຊາຊົນ ແລະ ກ້າວໜ້າ. ຈຸດປະສົງຫຼັກແມ່ນເພື່ອສົ່ງເສີມວັດທະນະທຳຂອງບັນດາຊົນເຜົ່າ

ໃຫ້ເກີດການຍອມຮັບເຊິ່ງກັນແລະກັນ ແລະ ເປັນກຳລັງດັນໃຫ້ແກ່ການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ. ທັດສະນະຂອງພັກຖືວ່າວັດທະນະທຳເປັນພື້ນຖານແຫ່ງການຍືນຍົງຄົງຕົວຂອງຊາດ, ເຊິ່ງຕ້ອງມີການເລືອກເຟັ້ນ ແລະ ປັບປຸງໃຫ້ສອດຄ່ອງກັບການພັດທະນາ.

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ໄດ້ຍົກໃຫ້ວຽກງານວັດທະນະທຳເປັນບູລິມະສິດເປົ້າໝາຍທີ 2 (ສະພາແຫ່ງຊາດ, 2021). ປະເທດລາວມີຄວາມອຸດົມສົມບູນທາງດ້ານສິລະປະການສະແດງຂອງ 50 ຊົນເຜົ່າ ທີ່ມີມໍລະດົກສືບທອດກັນມາເປັນພັນປີ. ປະເພດສິລະປະທີ່ໂດດເດັ່ນ ເຊັ່ນ: ບົດຟ້ອນນາງແກ້ວ ແລະ ບົດລະຄອນອີ່ປ໋ອກ ທີ່ມີປະຫວັດເກືອບ 700 ປີ ລວມທັງແຄນ ເຊິ່ງເປັນເຄື່ອງດົນຕີປະຈຳຊາດ ທີ່ສະທ້ອນເຖິງລີລາອັນອ່ອນຊ້ອຍ ແລະ ປະຫວັດສາດຂອງຊາວລາວ.

ການພັດທະນາສິລະປະການສະແດງໃນປັດຈຸບັນໄດ້ມີການສ້າງຜະລິດຕະພັນໃຫ້ຫຼາກຫຼາຍເພື່ອສົ່ງເສີມການທ່ອງທ່ຽວ ແລະ ພັດທະນາຫຼັກສູດການຮຽນ-ການສອນເພື່ອສ້າງສິລະປິນສືບທອດ. ດັ່ງນັ້ນ, ທີມງານຄົ້ນຄວ້າຈຶ່ງໄດ້ດຳເນີນໂຄງການວິໄຈກ່ຽວກັບການປົກປັກຮັກສາ ແລະ ສົ່ງເສີມສິລະປະການສະແດງທີ່ເປັນເອກະລັກຂອງເມືອງມໍລະດົກໂລກ ແຂວງຫຼວງພະບາງ. ຈຸດປະສົງແມ່ນເພື່ອສະໜອງຂໍ້ມູນພື້ນຖານທີ່ເປັນປະໂຫຍດໃຫ້ແກ່ພາກສ່ວນກ່ຽວຂ້ອງ ແລະ ປະຊາຊົນທົ່ວໄປ ໃນການຮັກສາມໍລະດົກອັນລ້ຳຄ່ານີ້ໃຫ້ຍືນຍົງ.

## ຈຸດປະສົງ

1. ເພື່ອຄົ້ນຫາປະຫວັດຄວາມເປັນມາຂອງສິລະປະການສະແດງພື້ນເມືອງ ທີ່ເປັນເອກະລັກຂອງແຂວງຫຼວງພະບາງ.

2. ເພື່ອອະທິບາຍຂະບວນການປ່ຽນແປງຂອງສິລະປະການສະແດງພື້ນເມືອງ ທີ່ເປັນເອກະລັກຂອງແຂວງຫຼວງພະບາງ.

3. ເພື່ອຄົ້ນຫາບັນຫາ ແລະ ສະເໜີແນະແນວທາງການປົກປັກຮັກສາ ແລະ ສົ່ງເສີມສິລະປະການສະແດງພື້ນເມືອງຂອງແຂວງຫຼວງພະບາງ.

## ວິທີດຳເນີນການ

ການຄົ້ນຄວ້າໃນຄັ້ງນີ້ກຸ່ມຜູ້ຄົ້ນຄວ້າໄດ້ນຳໃຊ້ວິທີການຄົ້ນຄວ້າແບບຄຸນນະພາບ ແບບມີໂຄງສ້າງແບບໃຊ້ຄຳຖາມສຳພາດ ໂດຍນຳໃຊ້ທິດສະດີຂອງເຄຣສເວວ (Creswell, 2014).

### ປະຊາກອນ ແລະ ກຸ່ມຕົວຢ່າງ

ການຄົ້ນຄວ້າຄັ້ງນີ້ເປັນການຄົ້ນຄວ້າແບບຄຸນນະພາບ. ສະນັ້ນ, ຈຶ່ງໄດ້ມີຄັດເລືອກເອົາຜູ້ໃຫ້ຂໍ້ມູນຫຼັກແບບເຈາະຈົງເອົາສະເພາະຜູ້ທີ່ມີຄວາມຮູ້, ຄວາມສາມາດກ່ຽວກັບສິລະປະການສະແດງທີ່ເປັນເອກະລັກທ້ອງຖິ່ນຂອງຊາວຫຼວງພະບາງເຊິ່ງປະກອບມີພະນັກງານຜູ້ທີ່ເຮັດວຽກກ່ຽວທີ່ກ່ຽວຂ້ອງກັບສິລະປະການສະແດງຂັ້ນພະແນກຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວແຂວງ ແລະ ບັນດາເມືອງຕ່າງໆທີ່ກ່ຽວຂ້ອງ, ຜູ້ມີຄວາມຊຳນານດ້ານການສະແດງເຊິ່ງມີນັກສະແດງຮຸ່ນອາວຸໂສ ແລະ ນັກສະແດງຮຸ່ນສືບທອດ ລວມທັງໝົດມີ 25 ຄົນ. ຍິງ 14 ຄົນ, ຊາຍ 11 ຄົນ.

### ວິທີການເກັບກຳຂໍ້ມູນ

ການຄົ້ນຄວ້າຄັ້ງນີ້ໄດ້ເກັບກຳຂໍ້ມູນແບບຄຸນນະພາບ ໂດຍອີງໃສ່ 2 ແບບຫຼັກຄື: ການເກັບກຳຂໍ້ມູນຈາກເອກະສານ ແລະ ການເກັບກຳຂໍ້ມູນຈາກການສຳພາດແບບເຈາະເລິກ.

- **ຮູບແບບການສຳພາດ:** ການສຳພາດແມ່ນໃຊ້ທັງຮູບແບບໂຕຕໍ່ໂຕ (individual interviews) ແລະ ແບບກຸ່ມສະເພາະ (focus group interviews).
- **ເຄື່ອງມື:** ນຳໃຊ້ຄຳຖາມສຳພາດແບບມີຮ່າງຄຳຖາມ (structured interviews) ເພື່ອຮັບປະກັນປະສິດທິພາບ. ຄະນະນັກຄົ້ນຄວ້າໄດ້ສ້າງຄຳຖາມຫຼັກ 7 ຂໍ້ ພ້ອມດ້ວຍຄຳຖາມເຈາະຈີ້ມສະເພາະອີກ 10 ຂໍ້.
- **ຂັ້ນຕອນ ແລະ ໄລຍະເວລາ:** ການສຳພາດໄດ້ດຳເນີນໃນວັນທີ 26 ເດືອນມີນາ ຫາ ວັນທີ 7 ເມສາ ປີ 2024. ໄດ້ມີການກະກຽມຂັ້ນຕອນສຳພາດ, ທົດສອບຄຳຖາມ, ແລະ ໃຫ້ຜູ້ເຂົ້າຮ່ວມເຊັນໜັງສືປະຕິຍານ (an informed consent letter) ເພື່ອຮັບປະກັນຄວາມໜ້າເຊື່ອຖືຂອງຂໍ້ມູນ.
- **ສະຖານທີ່:** ສະຖານທີ່ສຳພາດແມ່ນໄດ້ດຳເນີນຢູ່ເຮືອນຂອງຜູ້ຊຳນານການ ແລະ ຫ້ອງການຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວຂອງແຂວງ/ເມືອງ. ເວລາສະເລ່ຍໃນການສຳພາດຕໍ່ທ່ານແມ່ນປະມານ 30-40ນາທີ.
- **ການບັນທຶກຂໍ້ມູນ:** ທີມງານໄດ້ຈົດບັນທຶກລະອຽດ, ນຳໃຊ້ເຄື່ອງບັນທຶກສຽງ (ມີ 11 ໄຟລ໌) ແລະ ແກະບົດສຳພາດອອກມາວິເຄາະແບບບັນຍາຍ.

### ວິທີການວິເຄາະຂໍ້ມູນແບບຄຸນນະພາບ

ການວິເຄາະຂໍ້ມູນແບບຄຸນນະພາບ ແມ່ນອີງໃສ່ 4 ຂັ້ນຕອນຂອງການວິເຄາະຂໍ້ມູນ ແບບຄຸນນະພາບ ແນະນຳໂດຍ ທ່ານ Cresswell (2014) ດັ່ງນີ້:

ການວິເຄາະຂໍ້ມູນແບບຄຸນນະພາບແມ່ນອີງໃສ່ **4 ຂັ້ນຕອນ** ທີ່ແນະນຳໂດຍທ່ານ **Creswell (2014)**.

1. **ຂັ້ນຕອນທີ 1:** ຈັດກຸ່ມ ແລະ ກະກຽມຂໍ້ມູນ: ລວມມີການແກະບົດສຳພາດອອກຈາກເຄື່ອງອັດສຽງ, ກວດເບິ່ງອຸປະກອນ, ພິມບົດບັນທຶກພາກສະໜາມ, ແລະ ຈັດປະເພດຂໍ້ມູນ.
2. **ຂັ້ນຕອນທີ 2:** ອ່ານ ຫຼື ກວດເບິ່ງຂໍ້ມູນທັງໝົດ: ເພື່ອທຳຄວາມເຂົ້າໃຈພາບລວມ ແລະ ນຶກຄິດເຖິງຄວາມໝາຍລວມຂອງຂໍ້ມູນ.
3. **ຂັ້ນຕອນທີ 3:** ໃສ່ລະຫັດຂໍ້ມູນ (Coding): ເປັນຂະບວນການຈັດໝວດຂໍ້ມູນ ໂດຍການແຍກປະໂຫຍກຄຳເວົ້າອອກເປັນວັກ (ເປັນເລື່ອງ) ແລະ ຂຽນຄຳສັບເປັນຄຳແທນຊື່ໝວດຂອງຂໍ້ມູນ.
4. **ຂັ້ນຕອນທີ 4:** ຂຽນບົດອະທິບາຍການສຳພາດ (Narrative Research): ນັກຄົ້ນຄວ້າໄດ້ຈັດແບ່ງຄຳຕອບຈາກຄຳຖາມສຳພາດ ເປັນ 7 ຫົວເລື່ອງ (themes) ຫຼື ໝວດ (patterns).

## ຜົນການວິໄຈ ແລະ ການອະພິປາຍຜົນ

### ຜົນການວິໄຈ

- **ປະຫວັດຄວາມເປັນມາຂອງສິລະປະການສະແດງພື້ນເມືອງ**

ຜົນການຄົ້ນຄວ້າພົບວ່າ ສິລະປະການສະແດງພື້ນເມືອງຂອງແຂວງຫຼວງພະບາງມີ 3 ປະເພດຫຼັກໄດ້ແກ່: ການຂັບ, ການຟ້ອນ ແລະ ລະຄອນ.

- **ປະຫວັດຄວາມເປັນມາຂອງການຂັບຫຼວງພະບາງ**

- **ຕົ້ນກຳເນີດ:** ມີສີ່ທັດສະນະກ່ຽວກັບຕົ້ນກຳເນີດຂອງຂັບທຸ້ມຫຼວງພະບາງ : 1) ກຳເນີດຈາກໄມ້ໄຜ່ສຽດສີກັນຕາມຈັງຫວະລົມ; 2) ກຳເນີດຈາກການຢູ່ຮ່ວມກັນເປັນກຸ່ມເປັນກ້ອນ (“ຂັບຕຸ້ມ”); 3) ບອກເຖິງເວລາ ແລະ ສຽງທຸ້ມກ້ອງກັງວານ; 4) ກຳເນີດມາຈາກການອ່ານໜັງສື ຫຼື ອ່ານກາບກອນ.
- **ໄລຍະເວລາ:** ຂັບທຸ້ມເລີ່ມມີມາໃນສະຕະວັດທີ 14, ລັດຊະການຂອງເຈົ້າຟ້າງຸ່ມມະຫາລາດ (ປີ ຄ.ສ 1357).
- **ໂຄງສ້າງ ແລະ ເນື້ອໃນ:** ການຂັບທຸ້ມຫຼວງພະບາງມີທັງໝົດ 8 ບົດຂັບ, ເຊິ່ງເນື້ອໃນຫຼັກແມ່ນເວົ້າເຖິງຄວາມຮັກບ່າວ-ສາວທີ່ຕິດພັນກັບວິຖີຊີວິດ ແລະ ທຳມະຊາດ. ການປະດິດແຕ່ງປະເພດຂັບສ່ວນຫຼາຍມີ 9 ວັກ.

- **ປະຫວັດຄວາມເປັນມາຂອງການຟ້ອນ**

- **ຟ້ອນນາງແກ້ວ:** ກຳເນີດໃນສະຕະວັດທີ 14 ພາຍຫຼັງເຈົ້າຟ້າງຸ່ມນຳເອົາພະພຸດທະສາສະໜາເຂົ້າມາ. ບົດຟ້ອນຖືກໃຊ້ຖະຫວາຍເຈົ້າຟ້າງຸ່ມ ແລະ ມະເຫສີນາງແກ້ວເກງຍາ. ຜູ້ທີ່ຈະຟ້ອນຕ້ອງເປັນແມ່ຍິງທີ່ບໍລິສຸດເພາະເຊື່ອວ່າເປັນການຟ້ອນຖະຫວາຍເບື້ອງສູງ. ເດີມປະກອບດ້ວຍ 17 ທ່າ.
- **ຟ້ອນພະລັກພະລາມ:** ເກີດມາຈາກທ່າຟ້ອນຂອງມວຍລາຍລາວ ທີ່ໄດ້ຮັບອິດທິພົນຈາກເລື່ອງໃນວັນນະຄະດີຂອງຂະເໝນ. ສິລະປິນລາຊະສຳນັກລ້ານຊ້າງໄດ້ປັບປ່ຽນລາຍລະອຽດເກືອບທັງໝົດ : ຈາກແບບຂະເໝນ ມາເປັນແບບລາວທີ່ມີການໂຍກບ່າໄຫຼ່, ວົງແຂນສະເໜີ, ແລະ ຊັນເຂົ່າສູງ.
- **ລະຄອນອີ່ປ໋ອກ:** ກຳເນີດຕັ້ງແຕ່ສະໄໝເຈົ້າຟ້າງຸ່ມມະຫາລາດ. ແມ່ນການສະແດງທີ່ນຳໃຊ້ຫຸ່ນໄມ້ແກະສະຫຼັກ ແລະ ປະດັບປະດາດ້ວຍເສື້ອຜ້າ.

- **ຂະບວນການປ່ຽນແປງຂອງສິລະປະການສະແດງ**

ສິລະປະການສະແດງພື້ນເມືອງມີຂະບວນການປ່ຽນແປງທີ່ສຳຄັນ ດັ່ງນີ້:

- **ການຂັບຫຼວງພະບາງ:** ປ່ຽນຈາກການຂັບສະເພາະຢູ່ໃນບ້ານເພື່ອຮັບໃຊ້ຮີດຄອງປະເພນີ ດ້ວຍສັບສຳນວນໃນວົງແຄບ ມາເປັນການພັນລະນາແບບປະສົມປະສານ (ເກົ່າ-ໃໝ່). ໄດ້ເກີດມີການຈັດຕັ້ງກຸ່ມຂັບຂຶ້ນເພື່ອຮັບໃຊ້ໃນງານບຸນປະເພນີ, ງານຂຶ້ນເຮືອນໃໝ່, ແລະ ງານບຸນອື່ນໆ.
- **ການຟ້ອນນາງແກ້ວ:** ມີການຕັດທ່າຟ້ອນລົງຈາກເດີມ **17 ທ່າ ຍັງເຫຼືອແຕ່ 8 ທ່າ** ເນື່ອງຈາກທ່າຟ້ອນເກົ່າມັນຍາວເກີນໄປ ແລະ ມີການຈຳກັດເວລາໃນການສະແດງ.
- **ການຟ້ອນພະລັກພະລາມ:** ມີການດັດປັບທ່າຟ້ອນລົງຈາກເດີມ **10 ໄມ້ ຍັງເຫຼືອແຕ່ 3 ໄມ້** ດ້ວຍເຫດຜົນດຽວກັນ (ການຈຳກັດເວລາ).
- **ລະຄອນອີ່ປ໋ອກ:** ໄດ້ປ່ຽນເນື້ອໃນການສະແດງມາເປັນການໂຄສະນາກ່ຽວກັບສຸຂະສຶກສາ, ເສີມຂະຫຍາຍສິດທິເດັກ, ການຮັກສາສິ່ງແວດລ້ອມ, ແລະ ຕ້ານສິ່ງເສບຕິດ , ຕາມຄວາມຮຽກຮ້ອງຕ້ອງການຂອງສັງຄົມ.

**ບັນຫາ ແລະ ແນວທາງການປົກປັກຮັກສາ**

**ເຫດຜົນທີ່ຄວນປົກປັກຮັກສາ:**

ສິລະປະການສະແດງພື້ນເມືອງເປັນມໍລະດົກຕົກທອດອັນເກົ່າແກ່ຂອງບັນພະບຸລຸດ , ເປັນພູມປັນຍາຂອງທ້ອງຖິ່ນ , ແລະ ເປັນເອກະລັກສະເພາະທີ່ມີພຽງໜຶ່ງດຽວໃນແຂວງຫຼວງພະບາງ. ມັນເປັນສິ່ງດຶງດູດໃຈທີ່ສອນຄຸນງາມຄວາມດີ ແລະ ອະລິຍະທຳທີ່ຫຼາກຫຼາຍ.

**ບັນຫາໃນການປົກປັກຮັກສາ (8 ບັນຫາຫຼັກ):**

ຜົນການວິເຄາະພົບ 8 ບັນຫາຫຼັກທີ່ສົ່ງຜົນໃຫ້ສິລະປະເຫຼົ່ານີ້ມີຄວາມສ່ຽງທີ່ຈະສູນຫາຍ:

1. ຜູ້ທີ່ມີຄວາມຊຳນິຊຳນານ (ຜູ້ອາວຸໂສ) ນັບມື້ນັບຫຼຸດລົງ.
2. ການໂຄສະນາເຜີຍແຜ່ວັດທະນະທຳນາມມະທຳຍັງມີບໍ່ຫຼາຍ.
3. ຂາດທຶນຮອນໃນການຊຸກຍູ້ສົ່ງເສີມ.
4. ຄົນຮຸ່ນໃໝ່ບໍ່ຄ່ອຍໃຫ້ຄວາມສົນໃຈ.
5. ຜູ້ສືບທອດມີທ່າອ່ຽງຫຼຸດໜ້ອຍລົງ.
6. ຂາດຫຼັກສູດການຮຽນ-ການສອນສະເພາະທາງດ້ານສິລະປະການສະແດງ.
7. ສະພາບເສດຖະກິດບໍ່ອຳນວຍຄວາມສະດວກໃຫ້ນັກສະແດງດຳລົງຢູ່ໄດ້ດ້ວຍອາຊີບນັກສະແດງ.
8. ຂາດການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງໃນການຊຸກຍູ້ສົ່ງເສີມ

**ການອະພິປາຍຜົນ**

ສິລະປະການສະແດງພື້ນເມືອງຂອງຫຼວງພະບາງມີການປ່ຽນແປງທີ່ສຳຄັນທັງດ້ານຮູບແບບ ແລະ ເນື້ອໃນ. ການປ່ຽນແປງຮູບແບບ: ການຂັບໄດ້ປ່ຽນຈາກສັບສຳນວນວົງແຄບມາເປັນແບບປະສົມປະສານ (ເກົ່າ-ໃໝ່) ເພື່ອຮັບໃຊ້ງານທາງການເຊັ່ນ: ກອງປະຊຸມຂອງພັກ ແລະ ກິລາແຫ່ງຊາດ. ນອກຈາກນີ້, ຍັງມີການຈັດຕັ້ງກຸ່ມຂັບເພື່ອຮັບຈ້າງສະແດງໃນງານບຸນຕ່າງໆ. **ການປັບທ່າຟ້ອນ**: ການຕັດປັບທ່າຟ້ອນບາງແກ້ວ ແລະ ພະລັກພະລາມລົງ ແມ່ນເປັນຍ້ອນຄວາມຈຳກັດທາງດ້ານເວລາຂອງຜູ້ຊົມ. **ການຂະຫຍາຍຕົວ**: ການສະແດງໄດ້ຂະຫຍາຍຈາກການສະແດງສະເພາະໃນພະລາດຊະວັງ ມາເປັນການສະແດງປະຈຳອາທິດໃນໂຮງລະຄອນ ແລະ ສະແດງຢູ່ຕ່າງປະເທດນຳອີກ. ລະຄອນອີປ໋ອກ: ໄດ້ປັບບົດເລື່ອງມາເນັ້ນການໂຄສະນາເພື່ອສ້າງຈິດສຳນຶກກ່ຽວກັບຜົນຮ້າຍຂອງສິ່ງເສບຕິດໃຫ້ແກ່ເຍົາວະຊົນ ແລະ ຊາວໜຸ່ມ. ການປັບຕົວຕາມທຶນນິຍົມ ເຊິ່ງຜົນການວິໄຈນີ້ສອດຄ່ອງກັບການຄົ້ນຄວ້າຂອງ ປາໂນດ ສຸສຸວັນ ພ້ອມຄະນະ (2018) ທີ່ພົບວ່າ ສິລະປະການສະແດງມີການປັບປ່ຽນຈາກແບບປະເພນີນິຍົມ ມາເປັນແບບສາກົນນິຍົມ ໂດຍມີຕະຫຼາດເປັນປັດໄຈກຳນົດ. ເຫດຜົນການປົກປັກຮັກສາ: ການປົກປັກຮັກສາວັດທະນະທຳແມ່ນມີເຫດຜົນຫຼັກສອງຢ່າງຄື: ເປັນມໍລະດົກ ແລະ ພູມປັນຍາຂອງບັນພະບຸລຸດ; ແລະ ເປັນການຮັກສາເອກະລັກຂອງທ້ອງຖິ່ນ. ການສົ່ງເສີມຍັງຊ່ວຍປົກປັກຮັກສາຮີດຄອງປະເພນີ ແລະ ຊຸກຍູ້ການທ່ອງທ່ຽວນຳອີກ (ອັດທະຍາ ໄຊເສດ ແລະ ທິລະວັດ ຈັນທຶກ, 2017).

## ສະຫຼຸບຜົນການວິໄຈ

**ປະເພດສິລະປະ:** ສິລະປະການສະແດງທີ່ເປັນເອກະລັກຂອງຫຼວງພະບາງມີ 3 ປະເພດໄດ້ແກ່: ການຂັບ, ການຟ້ອນ ແລະ ລະຄອນ ເຊິ່ງມີປະຫວັດຄວາມເປັນມາອັນຍາວນານຕັ້ງແຕ່ສະຕະວັດທີ 14. **ການປ່ຽນແປງ:** ສິລະປະເຫຼົ່ານີ້ມີການປ່ຽນແປງເຊັ່ນ: ການຂັບໃຊ້ສຳນວນແບບປະສົມ ແລະ ການຟ້ອນນາງແກ້ວ/ພະລັກພະລາມ ມີການຕັດທ່າຟ້ອນລົງ ເນື່ອງຈາກການຈຳກັດເວລາຂອງຜູ້ຊົມ. **ບັນຫາ:** ຊາວຫຼວງພະບາງມີບັນຫາຫຼາຍຢ່າງໃນການປົກປັກຮັກສາ ເຊັ່ນ: ຜູ້ຊຳນິຊຳນານຫຼຸດລົງ, ຂາດທຶນຮອນ, ຄົນຮຸ່ນໃໝ່ບໍ່ສົນໃຈ, ຂາດຫຼັກສູດສະເພາະ, ແລະ ສະພາບເສດຖະກິດບໍ່ເອື້ອອຳນວຍໃຫ້ນັກສະແດງດຳລົງຊີວິດດ້ວຍອາຊີບນີ້.

## ຂໍ້ສະເໜີແນະ

### ຂໍ້ສະເໜີແນະຜົນຂອງການວິໄຈ

- **ດ້ານນະໂຍບາຍ ແລະ ການເງິນ:** ຄວນສ້າງກອງທຶນ ຫຼື ລະບົບເບ້ຍລ້ຽງສະເພາະໃຫ້ແກ່ນັກສິລະປິນອາວຸໂສ ແລະ ຮຸ່ນສືບທອດ ເພື່ອຫຼຸດຜ່ອນຄວາມສ່ຽງໃນການສູນຫາຍຂອງອາຊີບຍ້ອນປັດໄຈທາງເສດຖະກິດ.
- **ດ້ານການສົ່ງເສີມການທ່ອງທ່ຽວ:** ຄວນຮ່ວມມືກັບພາກທຸລະກິດການທ່ອງທ່ຽວ ແລະ ໂຮງແຮມ ເພື່ອບັນຈຸການສະແດງສິລະປະພື້ນເມືອງເຂົ້າໃນໂຄງການທ່ອງທ່ຽວ ເຊິ່ງຈະຊ່ວຍສ້າງລາຍໄດ້ໃຫ້ແກ່ນັກສະແດງ.
- **ດ້ານການສືບທອດ ແລະ ຫຼັກສູດ:** ຄວນພັດທະນາຫຼັກສູດການສິດສອນສິລະປະການສະແດງທີ່ເນັ້ນການບັນທຶກທ່າຟ້ອນ ແລະ ເນື້ອໃນແບບດັ້ງເດີມ ເຊັ່ນ: ທ່າຟ້ອນນາງແກ້ວ 17 ທ່າ ແລະ ພະລັກພະລາມ 10 ໄມ້ເຕັມ.
- **ດ້ານເຕັກໂນໂລຊີ:** ຄວນນຳໃຊ້ເຕັກໂນໂລຊີທັນສະໄໝໃນການບັນທຶກ ແລະ ເຜີຍແຜ່ພູມປັນຍາຂອງຜູ້ອາວຸໂສຜ່ານສື່ສັງຄົມອອນລາຍ ເພື່ອດຶງດູດຄວາມສົນໃຈຂອງຄົນຮຸ່ນໃໝ່.

### ຂໍ້ສະເໜີແນະໃນການວິໄຈຄັ້ງຕໍ່ໄປ

- **ການຂະຫຍາຍຂອບເຂດການສຶກສາ:** ຄວນສຶກສາລົງເລິກກ່ຽວກັບສິລະປະການສະແດງຂອງບັນດາເຜົ່າອື່ນໆ ພາຍໃນແຂວງຫຼວງພະບາງ ທີ່ມີຄວາມສ່ຽງຈະສູນຫາຍ ເພື່ອສ້າງຖານຂໍ້ມູນວັດທະນະທຳນາມມະທຳໃຫ້ຄົບຖ້ວນ.
- **ການມີສ່ວນຮ່ວມຂອງຊຸມຊົນ:** ຄວນວິໄຈກ່ຽວກັບຮູບແບບການມີສ່ວນຮ່ວມລະຫວ່າງ ພາກລັດ, ພາກເອກະຊົນ ແລະ ອົງການຈັດຕັ້ງສາກົນ (ເຊັ່ນ UNESCO) ໃນການສ້າງກົນໄກຊຸກຍູ້ສົ່ງເສີມສິລະປະການສະແດງແບບຍືນຍົງ.

ກຽດຕິຄຸນ

ຂໍຂອບໃຈ ທີມງານການວິໄຈທຸກຄົນທີ່ທຸ້ມເທກາຍໃຈ ແລະ ສຸ່ມໃສການຄົ້ນຄວ້າວິໄຈຈົນວຽກງານສຳເລັດຜົນ, ຂໍຂອບໃຈອົງການຈັດຕັ້ງທຸກພາກສ່ວນ ທັງພາກລັດ ແລະ ເອກະຊົນທີ່ໄດ້ໃຫ້ການສະໜັບສະໜູນ ແລະ ສະໜອງຂໍ້ມູນທີ່ເປັນປະໂຫຍດຕໍ່ການສຶກສາຄົ້ນຄວ້າ. ຜົນສຳເລັດໃນການວິໄຈຄົ້ນຄວ້າຄັ້ງນີ້, ຂໍຍົກຄຸນງາມຄວາມດີນີ້ແດ່ຜູ້ສະໜອງຂໍ້ມູນ ແລະ ຜູ້ທີ່ກ່ຽວຂ້ອງທຸກທ່ານ.

## ເອກະສານອ້າງອີງ

ແກ້ວ ໄຊຍະວົງ .(2016). *ບົດຂັບສະຫຼ່າງ-ສາມສ້າວ ຂອງບ້ານລາດຫານ ເມືອງງາ ແຂວງອຸດົມໄຊ.* ບົດຈົບຊັ້ນລະດັບປະລິນຍາຕີ ຄະນະພາສາສາດ ມະຫາວິທະຍາໄລ ສຸພານຸວົງ.

ກະຕຸນ ລັດຕະນະພອນ .(2016). *ບົດຂັບລ່ອງຮຸ່ງ ເຊີນທ່ຽວບຸນຊ້າງ ຂອງເລີດທະວີ ມານິດ ແລະ ຄຳພັດ ພົມມະລາດ.* ບົດຈົບຊັ້ນລະດັບປະລິນຍາຕີ ຄະນະພາສາສາດ ມະຫາວິທະຍາໄລ ສຸພານຸວົງ.

ກະຊວງແຜນການ ແລະ ການລົງທຶນ .(2016). *ບົດລາຍງານແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020).* ນະຄອນຫຼວງວຽງຈັນ. ສປປ ລາວ. (ເອກະສານອັດສຳເນົາ)

ກະນິກລັກ ມຸກເຕຍ .(2021). ໄດ້ເຮັດການວິໄຈຫົວຂໍ້ ການສຶກສາຄຸນຄ່າການດຳລົງຢູ່ ເພື່ອການອະນຸຮັກ ແລະ ຖ່າຍທອດສິລະປະການສະແດງຫຸ່ນລະຄອນນ້ອຍ". *ວາລະສານສັງຄົມສາດປີທີ 10 ສະບັບທີ 1 ມັງກອນ-ມິຖຸນາ.*

ກົມສິລະປະ-ວັດທະນະທຳ, ກະຊວງຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ (2023). *ຟ້ອນລາຍງ້າວບ້ານປາກກະຍຸງ ໃນ ສປປ ລາວ.* ນະຄອນຫຼວງວຽງຈັນ. (ເອກະສານອັດສຳເນົາ).

ຄອນ ເພັດກົມຄຳ .(2017). *ຂັບລຳທ້ອງຖິ່ນ ຂອງສົມລະປົນ ອ່ອຍ ແສງອຳພອນ.* ບົດຈົບຊັ້ນລະດັບປະລິນຍາຕີ ຄະນະພາສາສາດມະຫາວິທະຍາໄລ ສຸພານຸວົງ.

ສະພາແຫ່ງຊາດ. (2025). *ລັດຖະທຳມະນູນແຫ່ງ ສາທະລະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2025).* ນະຄອນຫຼວງວຽງຈັນ. (ເອກະສານອັດສຳເນົາ).

ສະພາແຫ່ງຊາດ. (2021). *ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021 – 2025).* ນະຄອນຫຼວງວຽງຈັນ. (ເອກະສານອັດສຳເນົາ).

ສະພາແຫ່ງຊາດ. (2017). *ກົດໝາຍ ວ່າດ້ວຍສິລະປະການສະແດງ ກົມສິລະປະການສະແດງ, ກະຊວງຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ.* ນະຄອນຫຼວງວຽງຈັນ. (ເອກະສານອັດສຳເນົາ).

ສຸລິສາ ເຈື້ອຫຼວງຄຳມີ. (2016). *ຂັບໄທດຳ ສົ່ງລູກສາວໄປເຮືອນຜົວ ທີ່ບ້ານທົ່ງອົ້ມ ເມືອງນ້ຳທາ ແຂວງຫຼວງນ້ຳທາ.* ບົດຈົບຊັ້ນລະດັບປະລິນຍາຕີ ຄະນະພາສາສາດ ມະຫາວິທະຍາໄລ ສຸພານຸວົງ.

ສົມນະ ອິນທະປັນຍາ. (2021). *ສຶກສາຂັບອ່ານໜັງສື ເມືອງໄຊຍະບູລີ.* ວິທະຍານິພົນລະດັບປະລິນຍາໂທ ສາຂາວັນນະຄະດີ ຄະນະອັກສອນສາດ ມະຫາວິທະຍາໄລແຫ່ງຊາດລາວ.

ສະຖາບັນວິທະຍາສາດສັງຄົມແຫ່ງຊາດ. (2019). *ປະມວນນໍລະດົກວັດທະນະທຳນິວັດຖຸເຜົ່າລາວ.* ນະຄອນຫຼວງວຽງຈັນ: ສຳນັກພິມແຫ່ງລັດ.

ສຸທິຣາ ອະທະວົງສາ. (2017). ການສືບທອດວັດທະນະທຳ ການຟ້ອນສາວໄໝ ແລະ ແນວທາງການພັດທະນາໃຫ້ເປັນຜະລິດຕະພັນບໍລິການ ການຕະຫຼາດເພື່ອສັງຄົມ. *ວາລະສານ ສະມາຄົມນັກວິໄຈ ປີທີ 2ສະບັບ ທີ 1 ມັງກອນ-ເມສາ.*

ສຸທິລາ ໂສສາດຕາເຜົ່າ. (1994). *ບົດແນະນຳການອະນຸລັກນໍລະດົກວັດທະນະທຳທ້ອງຖິ່ນ.* ມະຫາວິທະຍາໄລສິລະປະ ກຸງເທບມະຫານະຄອນ.

ຊະນາການ ສຸລະພະນາວັນເວດ. (2022). ການພັດທະນາການຂອງການສະແດງຫຸ່ນລະຄອນນ້ອຍ "ຄູທານຸພາບ" *ວາລະສານວິຊາການ ມະນຸດສາດ ແລະ ສັງຄົມສາດ ມະຫາວິທະຍາໄລລາດຊະພັດຊິນບູລີ* ປີທີ 5 ສະບັບທີ 1 ມັງກອນ-ເມສາ.

ນິເວດ ແວວສະມານະ. (2017). *ນະວັດຕະກຳການສະແດງຫຸ່ນກະບອກໄທ ເລື່ອງ ພະເນມິລາດ.* ບົດວິທະຍານິພົນລະດັບປະລິນຍາໂທ ສາຂາວິຊານາດຕະຍະສິນໄທ ພາກວິຊານາດຕະຍະສິນ ຄະນະສິລະປະກຳມະສາດ, ມະຫາວິທະຍາໄລຈຸລາລົງກອນ.

ປາໂນດ ສຸສຸວັນ ພ້ອມຄະນະ (2018). ການອະນຸລັກ ແລະ ພັດທະນາສິລະປະການສະແດງຫຸ່ນລະຄອນນ້ອຍໃນປະເທດໄທ *ວາລະສານກະແສວັດທະນະທຳສຶກສາ (ສະບັບປີ 2018 ໜ້າທີ 26-40)*

ອຸສະນີ ເພີ່ມດີ (2015). *ການສື່ສານເພື່ອອະນຸຮັກຫຸ່ນລະຄອນນ້ອຍໂຈຫຼຍ* ສ່ວນໜຶ່ງຂອງຫຼັກສູດປະລິນຍາໂທນິເທດສາດ ສາຂາວິຊານິເທດສາດ ມະຫາວິທະຍາໄລສຸໂຂໄທທຳມາທິລາດ.

ອຸສາພອນ ບຸນເຮືອງ ພ້ອມຄະນະ. (2019). ແນວທາງການອະນຸລັກ ແລະ ສືບທອດການສະແດງໂຂນ *ວາລະສານເຊັນຈອນ (ໜ້າທີ 70-86).*

ອັດທະຍາ ໄຊເສດ ແລະ ທິລະວັດ ຈັນທຶກ. (2017). *ແນວທາງໃນການອະນຸລັກສິລະປະການສະແດງພື້ນບ້ານຂອງຜູ້ສູງອາຍຸ ເພື່ອໃຫ້ໄວຮຸ່ນໄດ້ຕະໜັກຮູ້* ເຜີຍແຜ່ໃນກອງປະຊຸມວິຊາການມະຫາວິທະຍາໄລເທັກໂນໂລຢີລາດຊະມົງຄົນ ຄັ້ງທີ 9.

ຮຸ່ງທິບ ສຸວັນນະສະຖິດ ແລະ ກິດສະໜາ ໄວສຳລວດ. (2019). ສຶກສາ ການສົ່ງເສີມ ແລະ ການອະນຸລັກສິລະປະການສະແດງມະໂນລາ ຂອງອົງກອນປົກຄອງສ່ວນທ້ອງຖິ່ນ ຈັງຫວັດນະຄອນສີທຳມະລາດ. *ວາລະສານ ມະນຸດສາດ ແລະ ສັງຄົມສາດ ມະຫາວິທະຍາໄລ ລາດຊະພັກສຸລິນ* ປີທີ 21 ສະບັບທີ 1

ໜູນແກ້ວ ອໍລະບູນ .(2008*). ບົດປາຖະກະຖາ ຫົວຂໍ້ ການອະນຸລັກ ແລະ ສົ່ງເສີມວັດທະນະທຳອັນດີງາມຂອງຊາດລາວ.* ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ.

ໜູນແກ້ວ ອໍລະບູນ. (2014). *ບົດປາຖະກະຖາ ຫົວຂໍ້ ທິດຊີ້ນຳໃນການປົກປັກຮັກສາ ແລະ ແນວທາງສົ່ງເສີມວັດທະນະທຳອັນດີງາມຂອງຊາດລາວ.* ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ.

ໜອນ ຄູດທະວົງ (2017). *ສິລະປະການປະດິດແຕ່ງໃນປຶ້ມບົດ "ອ່ານໜັງສືຫຼວງພະບາງ" ຂອງຫຸມພັນ ຣັດຕະນະວົງ (1998).* ບົດຈົບຊັ້ນລະດັບປະລິນຍາຕີ ຄະນະພາສາສາດ ມະຫາວິທະຍາໄລ ສຸພານຸວົງ.

Creswell, J. W. (2014). *ການອອກແບບການຄົ້ນຄວ້າ: ວິທີການວິທີການດ້ານຄຸນນະພາບ, ປະລິມານ ແລະ ແບບປະສົມ* (4th ed.). Thousand Oaks, CA.